Australian Government

GLOBAL INITIATIVE
AGAINST TRANSNATIONAL ORGANIZED CRIME

ຄູ່ມືແນະນຳ ການສະໝັກຂໍທຶນ

ເຄືອຂ່າຍແມ່ນ້ຳຂອງເພື່ອຕ້ານອາຊະຍາກຳຂ້າມຊາດ (MNET-CTC)

ອົງການຈັດຕັ້ງສາກົນເພື່ອຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ

2026

ຈຳນວນເງິນທຶນ ແລະ ໄລຍະເວລາຂອງການນຳໃຊ້ທຶນ

ໄລຍະເວລາສູງສຸດຂອງທຶນແມ່ນ 1 ປີ (12 ເດືອນ). ຜູ້ສະໝັກຂໍທຶນສາມາດສະເໜີໂຄງການທີ່ມີໄລຍະເວລາດຳເນີນງານທີ່ສັ້ນກວ່ານີ້ ກໍ່ໄດ້ເຊັ່ນກັນ.

ໄລຍະເວລາດຳເນີນໂຄງການພາຍໃຕ້ທຶນຮອບນີ້ ແມ່ນເລີ່ມແຕ່ວັນທີ 15 ກຸມພາ 2027 ຫາ 15 ກຸມພາ 2028.

- ຄາດວ່າທຶນສ່ວນໃຫຍ່ຈະມີມູນຄ່າລະຫວ່າງ 30,000–65,000 ໂດລາອົດສະຕຣາລີ (AUD), ໂດຍຂຶ້ນກັບຂອບເຂດຂອງ ກິດຈະກຳ, ລະດັບຄວາມສັບຊ້ອນ ແລະ ຮູບແບບການຈັດຕັ້ງປະຕິບັດ ບໍ່ວ່າຈະເປັນຮູບແບບຈັດຕັ້ງປະຕິບັດຮ່ວມ (Coalition) ຫຼື ແບບໃດ. ການກຳນົດວົງເງິນທຶນສູງສຸດຄວນຄຳນຶງເຖິງໄລຍະເວລາ ແລະ ລະດັບຄວາມສັບຊ້ອນຂອງກິດຈະກຳທີ່ສະເໜີ.
- MNET-CTC ມີເປົ້າໝາຍຈັດສັນທຶນຢ່າງເໝາະສົມຕາມສັດສ່ວນໃຫ້ແກ່ 4 ປະເທດໃນອະນຸພາກພື້ນແມ່ນ້ຳຂອງ ຄື: ກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ. ນອກຈາກນີ້, MNET-CTC ຍັງຈັດສັນທຶນໃຫ້ແກ່ໂຄງການທີ່ເນັ້ນໃສ່ປະເທດມຽນມາເຊັ່ນກັນ.

ຖ້າຫາກຜູ້ສະໝັກມີແຫຼ່ງທຶນອື່ນທີ່ຈະສົມທົບໃຫ້ກັບໂຄງການຂອງຕົນ, GI-TOC ຂໍແນະນຳໃຫ້ລະບຸສັດສ່ວນຂອງເງິນທຶນຈາກແຫຼ່ງ ອື່ນໄວ້ໃນງົບປະມານ. ທັ້ງນີ້, ຈະບໍ່ມີການກຳນົດຈຳນວນເງິນທຶນຂັ້ນຕ່ຳ ຫຼື ຂັ້ນສູງຈາກແຫຼ່ງອື່ນເພື່ອໃຫ້ມີສິດສະໝັກຂໍທຶນ.

ທຶນຊ່ວຍເຫຼືອນີ້ແມ່ນສຳລັບໂຄງການທີ່ບໍ່ໄດ້ດຳເນີນຢ່າງຕໍ່ເນື່ອງ ແລະ ການໃຫ້ທຶນຈະສິ້ນສຸດລົງເມື່ອຄົບກຳນົດໄລຍະເວລາຂອງທຶນ ຊ່ວຍເຫຼືອ.

ເງື່ອນໄຂການມີສິດສະໝັກຂໍທຶນ

GI-TOC ບໍ່ສາມາດພິຈາລະນາຄຳຮ້ອງຂໍທຶນຈາກລັດ, ເຂດປົກຄອງ ຫຼື ໜ່ວຍງານ ຫຼື ອົງການຂອງລັດຖະບານໄດ້. ເພື່ອໃຫ້ມີສິດສະ ໝັກຂໍທຶນ, ອົງການ ແລະ/ຫຼື ບຸກຄົນ ຕ້ອງມີຄຸນສົມບັດດັ່ງນີ້:

- *ເປັນນິຕິບຸກຄົນ ຫຼື ມີເອກະສານປະຈຳຕົວທີ່ຖືກຕ້ອງຕາມກົດໝາຍ ເຊິ່ງສາມາດເຮັດຂໍ້ຕົກລົງ ຫຼື ສັນຍາທີ່ມີຜົນຜູກມັດຕາມ ກົດໝາຍໄດ້;*
- ສະແດງໃຫ້ເຫັນເຖິງປະສົບການທີ່ຜ່ານມາໃນການຈັດຕັ້ງປະຕິບັດກິດຈະກຳທີ່ແກ້ໄຂບັນຫາໂດຍກົງກ່ຽວກັບອາຊະຍາກຳທີ່ມີ ການຈັດຕັ້ງໃນພາກພື້ນແມ່ນ້ຳຂອງ ໃນຫົວຂໍ້ຕ່າງໆ ເຊັ່ນ: ຢາເສບຕິດທີ່ຜິດກົດໝາຍ, ອາຊະຍາກຳທາງດ້ານການເງິນ, ການຂູດຮີດ ທາງເພດຕໍ່ເດັກ ແລະ/ຫຼື ປັດໄຈຂັບເຄື່ອນ ແລະ ຕົວເອື້ອອຳນວຍ ຂອງເສດຖະກິດຜິດກົດໝາຍ; ແລະ

- ສາມາດສື່ສານພາສາອັງກິດ ແລະ/ຫຼື ຢ່າງໜ້ອຍໜຶ່ງພາສາໃນພາກພື້ນແມ່ນ້ຳຂອງໄດ້.

ການນຳໃຊ້ເງິນທຶນສະໜັບສະໜູນ

ກິດຈະກຳທີ່ມີສິດໄດ້ຮັບທຶນ

ທຶນສະໜັບສະໜູນການຮ່ວມມືພາຍໃຕ້ MNET-CTC ແມ່ໃສ່ການສະໜັບສະໜູນກິດຈະກຳໂຄງການທີ່ຊ່ວຍເສີມສ້າງຄວາມຢືດຢຸ່ນໃນລະດັບຊຸມຊົນ. ກິດຈະກຳທີ່ສະເໜີມາອາດຈະຢູ່ໃນຮູບແບບໃດກໍໄດ້ ແຕ່ຄວນຊຸກຍູ້ເປົ້າໝາຍການສ້າງຄວາມເຂັ້ມແຂງໃນລະດັບຊຸມຊົນ ແລະ ດຳເນີນງານໃນລັກສະນະຮ່ວມມືກັນ. ໝາຍຄວາມວ່າ ກິດຈະກຳທີ່ສະເໜີຕ້ອງສ້າງຜົນໄດ້ຮັບທີ່ຊ່ວຍເສີມສ້າງຄວາມຢືດຢຸ່ນຂອງຊຸມຊົນໃນການຮັບມືກັບບັນຫາຢາເສບຕິດຜິດກົດໝາຍ, ອາຊະຍາກຳທາງດ້ານການເງິນ, ການຊຸດຮີດທາງເພດຕໍ່ເດັກ ແລະ/ຫຼື ປັດໄຈຂັບເຄື່ອນ ແລະ ປັດໄຈເອື້ອອຳນວຍຂອງອາຊະຍາກຳເຫຼົ່ານີ້. ນອກຈາກນັ້ນ, ກິດຈະກຳດັ່ງກ່າວຕ້ອງດຳເນີນງານຮ່ວມກັນໂດຍສອງ ຫຼື ສາມອົງການ.

- **ແນວທາງການເສີມສ້າງຄວາມຢືດຢຸ່ນຕໍ່ອາຊະຍາກຳທີ່ມີການຈັດຕັ້ງແມ່ນຫຍັງ?** ໂຄງການທີ່ນຳໃຊ້ແນວທາງການເສີມສ້າງຄວາມຢືດຢຸ່ນຕໍ່ອາຊະຍາກຳທີ່ມີການຈັດຕັ້ງ ຄວນສະແດງໃຫ້ເຫັນຢ່າງຊັດເຈນວ່າ ກິດຈະກຳ ແລະ ຜົນໄດ້ຮັບທີ່ສະເໜີນັ້ນເຊື່ອມໂຍງກັບແນວໂນ້ມຂອງອາຊະຍາກຳແນວໃດ. ແນວທາງນີ້ສາມາດນຳໄປປະຕິບັດໄດ້ໃນຫຼາຍຮູບແບບ, ແຕ່ບົດສະເໜີໂຄງການຄວນສະແດງໃຫ້ເຫັນເຖິງຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບສະພາບອາຊະຍາກຳ, ຜົນກະທົບທີ່ເປັນອັນຕະລາຍ ແລະ ກົນໄກ/ເຄື່ອງມື ທີ່ສາມາດນຳໃຊ້ເພື່ອປ່ຽນແປງລະບົບ. ວິທີການນີ້ພິຈາລະນາວິທີການທີ່ຜູ້ກະທຳຜິດລວມໂຕກັນເປັນອົງກອນເພື່ອສ້າງອາຊະຍາກຳຮ້າຍແຮງ ແລະ ອາຊະຍາກຳທີ່ມີການຈັດຕັ້ງ, ລວມທັງປັດໄຈເອື້ອອຳນວຍທີ່ຊ່ວຍໃຫ້ຜູ້ກະທຳຜິດເຫຼົ່ານີ້ສາມາດແລກປ່ຽນສິນຄ້າ ແລະ ບໍລິການຜິດກົດໝາຍ.

  ຄວາມຢືດຢຸ່ນ ໝາຍເຖິງ ຄວາມສາມາດໃນການຕ້ານທານ, ປັບຕົວ ແລະ ສະກັດກັ້ນອາຊະຍາກຳທີ່ມີການຈັດຕັ້ງ. ດັດຊະນີອາຊະຍາກຳທີ່ມີການຈັດຕັ້ງຂອງ GI-TOC ໄດ້ກຳນົດຄວາມຢືດຢຸ່ນໄວ້ 12 ມິຕິ ເຊິ່ງເປັນອົງປະກອບພື້ນຖານສຳຄັນສຳລັບການຮັບມືກັບອາຊະຍາກຳ ໃນດ້ານການເມືອງ, ກົດໝາຍ, ເສດຖະກິດ ແລະ ສັງຄົມ. ເມື່ອນຳອົງປະກອບເຫຼົ່ານີ້ມາປະກອບກັນ ຈະມີທ່າແຮງໃນການສ້າງມາດຕະການຮັບມືຕໍ່ອາຊະຍາກຳທີ່ມີການຈັດຕັ້ງຢ່າງຮອບດ້ານ ແລະ ມີປະສິດທິຜົນ. ກິດຈະກຳດ້ານການເສີມສ້າງຄວາມຢືດຢຸ່ນ ແມ່ນກິດຈະກຳໃດໆກໍຕາມທີ່ນຳເອົາອົງປະກອບພື້ນຖານເຫຼົ່ານີ້ມາໃຊ້ເປັນກົນໄກໃນການປ່ຽນແປງລະບົບທີ່ມີຄວາມສັບຊ້ອນ ເພື່ອສະກັດກັ້ນອາຊະຍາກຳ.

  ດັ່ງນັ້ນ, ແນວທາງການເສີມສ້າງຄວາມຢືດຢຸ່ນຕໍ່ອາຊະຍາກຳທີ່ມີການຈັດຕັ້ງ ຈຶ່ງມີຂອບເຂດກວ້າງກວ່າການດຳເນີນກິດຈະກຳ, ການສິ່ງມອບວຽກ ຫຼື ຜົນຜະລິດໃດໜຶ່ງ. ແນວຄິດສຳຄັນແມ່ນ ກິດຈະກຳຕ່າງໆຕ້ອງສາມາດສ້າງການປ່ຽນແປງແບບເທື່ອລະກ້າວໃນລະບົບ ເພື່ອບໍ່ໃຫ້ມີການຜະລິດ, ຂົນສົ່ງ, ເກັບຮັກສາ ຫຼື ແລກປ່ຽນສິນຄ້າ ແລະ ການບໍລິການທີ່ຜິດກົດໝາຍ. ເມື່ອນຳແນວທາງການເສີມສ້າງຄວາມຢືດຢຸ່ນໄປປະຕິບັດຢ່າງມີປະສິດທິຜົນ ຈະຕ້ອງສາມາດສ້າງຜົນໄດ້ຮັບທີ່ສອດຄ່ອງກັບທັງ

12 ມິຕິຂອງຄວາມຢືດຢຸ່ນ ເພື່ອໃຫ້ລະບົບດ້ານການເມືອງ, ກົດໝາຍ, ເສດຖະກິດ ແລະ ສັງຄົມ ສາມາດເຮັດວຽກປະສານກັນຢ່າງຮອບດ້ານ. ສຳລັບຂໍ້ມູນເພີ່ມເຕີມ ກະລຸນາເຂົ້າເບິ່ງ: www.ocindex.net

- **ແນວທາງການເຮັດວຽກທີ່ອີງໃສ່ຊຸມຊົນແມ່ນຫຍັງ?** ບໍ່ມີຮູບແບບດຽວທີ່ກຳນົດຕາຍຕົວສຳລັບການເຮັດວຽກໂດຍອີງໃສ່ຊຸມຊົນ ເນື່ອງຈາກວ່າມາດຕະການແຊກແຊງສາມາດມີຮູບແບບສະເພາະທີ່ແຕກຕ່າງກັນໄປ ຕາມສະພາບການ ແລະ ບັນຫາທີ່ຕ້ອງການແກ້ໄຂ. ແນວໃດກໍຕາມ, ການເຮັດວຽກໃນລະດັບຊຸມຊົນໝາຍເຖິງການດຳເນີນມາດຕະການແຊກແຊງໃນຂອບເຂດຂະໜາດນ້ອຍ ຫຼື ໃນລະດັບທ້ອງຖິ່ນ ເຊັ່ນ: ການແກ້ໄຂບັນຫາການໄຫຼວຽນ ແລະ ການສະສົມຂອງສິນຄ້າຜິດກົດໝາຍໃນຕະຫຼາດ, ການເພີ່ມຂີດຄວາມສາມາດໃນການປ້ອງກັນ ແລະ ຟື້ນຕົວຈາກຜົນກະທົບທີ່ບໍ່ຄາດຄິດ ລວມທັງການຍົກລະດັບຄວາມຮູ້, ທັດສະນະຄະຕິ ແລະ ແນວປະຕິບັດຂອງປະຊາຊົນ. ເຖິງແມ່ນວ່າມາດຕະການແຊກແຊງເຫຼົ່ານີ້ຈະດຳເນີນໃນຂະໜາດນ້ອຍ ແຕ່ກໍສາມາດສ້າງຜົນກະທົບໃນວົງກ້ວ້າງຂຶ້ນ ທັງໃນລະດັບຊາດ ແລະ ພາກພື້ນ.

  ແນວທາງການເຮັດວຽກທີ່ອີງໃສ່ຊຸມຊົນ ມຸ່ງເນັ້ນການເຮັດວຽກບໍ່ພຽງແຕ່ ພາຍໃນ ຊຸມຊົນເທົ່ານັ້ນ ແຕ່ຍັງເປັນການເຮັດວຽກຮ່ວມກັບ ຊຸມຊົນ ໂດຍສົ່ງເສີມໃຫ້ສະມາຊິກຊຸມຊົນເຂົ້າມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການສ້າງຄວາມຢືດຢຸ່ນ. ການມີສ່ວນຮ່ວມຂອງຊຸມຊົນ ໝາຍເຖິງການທີ່ປະຊາຊົນເຂົ້າຮ່ວມໃນກິດຈະກຳຕ່າງໆ ໂດຍບໍ່ຈຳເປັນຕ້ອງເປັນຜູ້ຊ່ຽວຊານ, ຜູ້ປະຕິບັດງານ ຫຼື ຜູ້ມີອຳນາດໜ້າທີ່ໃນຂະແໜງການໃດໜຶ່ງ. ພວກເຂົາສາມາດຮ່ວມມືກັບຜູ້ໃຫ້ບໍລິການ, ໂຮງຮຽນ, ກຸ່ມອົງການສາສະໜາ ແລະ ສະມາຄົມຊຸມຊົນພາຍໃນທ້ອງຖິ່ນ.

- **ການຮ່ວມມືແມ່ນຫຍັງ?** ໂດຍທົ່ວໄປ ໝາຍເຖິງການທີ່ສອງອົງການຂຶ້ນໄປເຮັດວຽກຮ່ວມກັນ ເພື່ອບັນລຸເປົ້າໝາຍຮ່ວມກັນ ໂດຍແຕ່ລະອົງການຕ່າງກໍ່ມີການປະກອບສ່ວນ ດ້ານຄວາມຮູ້, ທັກສະ ແລະ ຂີດຄວາມສາມາດຂອງຕົນ. ການຮ່ວມມືຕ້ອງອາໄສຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນ ແລະ ການສື່ສານຢ່າງເປີດເຜີຍ. ນອກຈາກນັ້ນ, ຍັງມີຄວາມໝາຍກ້ວ້າງກ່ວ່າການປະສານງານທົ່ວໄປ ເນື່ອງຈາກທຸກຝ່າຍມີສ່ວນຮ່ວມໃນການຕັດສິນໃຈ ແລະ ຮ່ວມກັນຮັບຜິດຊອບຕໍ່ຜົນໄດ້ຮັບ.

ຜູ້ສະໝັກທີ່ມີຄຸນສົມບັດໂດດເດັ່ນ ຄວນສະແດງໃຫ້ເຫັນເຖິງຄວາມເຊື່ອມໂຍງຢ່າງຊັດເຈນລະຫວ່າງການສ້າງຄວາມຢືດຢຸ່ນຕໍ່ອາຊະຍາກຳທີ່ມີການຈັດຕັ້ງ, ການຮ່ວມມື ແລະ ວຽກງານຫຼັກ ລວມທັງພັນທະກິດຂອງອົງການຕົນ.

ພື້ນທີ່ທີ່ມີສິດໄດ້ຮັບທຶນ

ກິດຈະກຳຄວນດຳເນີນຢູ່ໃນພື້ນທີ່ ແລະ/ຫຼື ສະຖານທີ່ໜຶ່ງແຫ່ງຂຶ້ນໄປ ພາຍໃນປະເທດໃດໜຶ່ງ ຫຼື ຫຼາຍປະເທດໃນອະນຸພາກພື້ນແມ່ນ້ຳຂອງ ລວມມີ ກຳປູເຈຍ, ລາວ, ມຽນມາ[1], ໄທ ແລະ/ຫຼື ຫວຽດນາມ. ກິດຈະກຳທີ່ສະເໜີຂໍທຶນສາມາດດຳເນີນພາຍໃນປະເທດໃດໜຶ່ງເທົ່ານັ້ນ ຫຼື ດຳເນີນຄອບຄຸມຫຼາຍປະເທດກໍໄດ້.

[1] Myanmar engagement will be reviewed on a case-by-case basis, should operating context allow.

ເກນການປະເມີນ

ບົດສະເໜີໂຄງການຂອງຜູ້ສະໝັກຈະຖືກປະເມີນຕາມເກນດັ່ງຕໍ່ໄປນີ້:

1) **ເກນດ້ານອາຊະຍາກຳຈັດຕັ້ງ (ນ້ຳໜັກ 20%)**
    a. **ຜູ້ກະທຳຜິດທາງອາຍາ** – ພິຈາລະນາວ່າບົດສະເໜີໂຄງການສາມາດສະແດງຫຼັກຖານໄດ້ຫຼາຍໜ້ອຍພຽງໃດ ກ່ຽວກັບປະເພດຂອງຜູ້ກະທຳຜິດໃນຂະບວນການອາຊະຍາກຳທີ່ມີຈັດຕັ້ງທີ່ສົ່ງຜົນກະທົບຕໍ່ຊຸມຊົນຂອງຕົນ **(ນ້ຳໜັກ 10%).**
    b. **ຕະຫຼາດອາຊະຍາກຳ** – ພິຈາລະນາວ່າບົດສະເໜີໂຄງການສາມາດສະແດງຫຼັກຖານໄດ້ຫຼາຍໜ້ອຍພຽງໃດ ກ່ຽວກັບຂະໜາດ ແລະ ຂອບເຂດຂອງຕະຫຼາດອາຊະຍາກຳທີ່ສົ່ງຜົນກະທົບຕໍ່ຊຸມຊົນຂອງຕົນ **(ນ້ຳໜັກ 10%).**
2) **ເກນດ້ານຊຸມຊົນ (ນ້ຳໜັກ 20%)**
    a. **ເຫດຜົນໃນການກຳນົດກຸ່ມເປົ້າໝາຍ** – ພິຈາລະນາວ່າຜູ້ສະໝັກໃຫ້ເຫດຜົນໄດ້ຊັດເຈນພຽງໃດ ໃນການກຳນົດຜູ້ທີ່ຈະໄດ້ຮັບຜົນປະໂຫຍດ ໂດຍພິຈາລະນາວ່າບຸກຄົນ ຫຼື ກຸ່ມຄົນດັ່ງກ່າວໄດ້ຮັບຜົນກະທົບຈາກ ຫຼື ມີສັກກະຍະພາບໃນການສົ່ງຜົນກະທົບຕໍ່ລະບົບນິເວດຂອງອາຊະຍາກຳ **(ນ້ຳໜັກ 5%).**
    b. **ເຫດຜົນໃນການກຳນົດພື້ນທີ່** – ພິຈາລະນາວ່າພື້ນທີ່ ແລະ ສະຖານທີ່ດຳເນີນກິດຈະກຳ ມີຄວາມສອດຄ່ອງກັບບັນຫາອາຊະຍາກຳທີ່ມີການຈັດຕັ້ງ ແລະ ເຫດຜົນໃນການກຳນົດກຸ່ມຜູ້ທີ່ຈະໄດ້ຮັບຜົນປະໂຫຍດຫຼາຍໜ້ອຍພຽງໃດ **(ນ້ຳໜັກ 5%).**
    c. **ຄວາມເຊື່ອມໂຍງຢ່າງໃກ້ຊິດກັບຊຸມຊົນ** – ພິຈາລະນາວ່າຜູ້ສະໝັກສາມາດສະແດງໃຫ້ເຫັນໄດ້ຫຼາຍໜ້ອຍພຽງໃດ ວ່າຕົນມີຄວາມໃກ້ຊິດ ແລະ ມີຄວາມສຳພັນທີ່ແນ່ນແຟ້ນກັບກຸ່ມຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກໂຄງການ (ໂດຍມີການຢືນຢັນຈາກບຸກຄົນທີ່ມີປະສົບການໂດຍກົງກັບບັນຫາ, ຜູ້ຕິດຕໍ່, ຜູ້ມີຄວາມສຳພັນ ຫຼື ເຄືອຂ່າຍທີ່ກ່ຽວຂ້ອງ) ລວມທັງມີຄວາມເຊື່ອມໂຍງກັບພື້ນທີ່ ແລະ ສະຖານທີ່ດຳເນີນກິດຈະກຳ (ໂດຍມີການຢືນຢັນຈາກໂຄງການ ຫຼື ກິດຈະກຳທີ່ເຄີຍດຳເນີນມາ ຫຼື ກຳລັງດຳເນີນຢູ່) **(ນ້ຳໜັກ 10%).**
3) **ເກນດ້ານຄວາມຍືດຢຸ່ນ (ນ້ຳໜັກ 50%)**
    a. **ແນວທາງການສ້າງຄວາມຍືດຢຸ່ນ** – ພິຈາລະນາວ່າກິດຈະກຳທີ່ຜູ້ສະໝັກສະເໜີມາ ນຳໃຊ້ປັດໄຈ ຫຼື ກົນໄກສຳຄັນໃນການສ້າງຄວາມຍືດຢຸ່ນ ເພື່ອຕ້ານທານ, ປັບຕົວຕໍ່ ແລະ/ຫຼື ສະກັດກັ້ນລະບົບອາຊະຍາກຳທີ່ມີການຈັດຕັ້ງໄດ້ຫຼາຍໜ້ອຍພຽງໃດ **(ນ້ຳໜັກ 15%).**
    b. **ການແນໃສ່ຜົນໄດ້ຮັບ** – ພິຈາລະນາວ່າຮູບແບບ ແລະ ວິທີການດຳເນີນກິດຈະກຳທີ່ຜູ້ສະໝັກສະເໜີມາ ມີແນວໂນ້ມທີ່ຈະສ້າງຜົນໄດ້ຮັບເປັນຮູບປະທຳໄດ້ຫຼາຍໜ້ອຍພຽງໃດ **(ນ້ຳໜັກ 10%).**
    c. **ການຮ່ວມມື** – ພິຈາລະນາວ່າກິດຈະກຳຕ່າງໆ ຖືກດຳເນີນຮ່ວມກັນຫຼາຍໜ້ອຍພຽງໃດ ລະຫວ່າງອົງການຜູ້ສະໝັກ ແລະ ບຸກຄົນ ຫຼື ກຸ່ມອື່ນໆ ທີ່ກ່ຽວຂ້ອງພາຍໃນຊຸມຊົນຂອງຕົນ **(ນ້ຳໜັກ 25%).**
4) **ເກນດ້ານຄວາມຄຸ້ມຄ່າຂອງງົບປະມານ (ນ້ຳໜັກ 10%)**

a. **ຄວາມຄຸ້ມຄ່າຂອງງົບປະມານ** – ພິຈາລະນາວ່າຍົດສະເໜີໂຄງການມີການບໍລິຫານຈັດການຕາມຫຼັກການຄວາມຄຸ້ມຄ່າຂອງງົບປະມານ ເຊິ່ງປະກອບມີ ຄວາມປະຢັດ, ປະສິດທິພາບ, ປະສິດຜົນ ແລະ ຈັນຍາບັນ ຫຼາຍໜ້ອຍພຽງໃດ **(ນ້ຳໜັກ 5%).**

b. **ຄວາມຍືນຍົງ** – ພິຈາລະນາວ່າກິດຈະກຳທີ່ສະເໜີມາ ນຳໃຊ້ລະບົບ ແລະ ກົນໄກທີ່ມີຢູ່ໃນລະດັບຊຸມຊົນ ເພື່ອສ້າງຄວາມເປັນເຈົ້າການໃນທ້ອງຖິ່ນ ແລະ ເສີມສ້າງຂີດຄວາມສາມາດ ເຊິ່ງມີແນວໂນ້ມທີ່ຈະສືບຕໍ່ຄົງຢູ່ໄດ້ ຫຼັງຈາກສິ້ນສຸດການສະໜັບສະໜູນທຶນ **(ນ້ຳໜັກ 5%).**

ວິທີການສະໝັກ

ຂັ້ນຕອນການສະໝັກຂໍທຶນມີ 2 ຂັ້ນຕອນ. ຜູ້ສະໝັກທີ່ໄດ້ຮັບການປະເມີນວ່າມີຄະແນນສູງ ຈະໄດ້ຮັບເຊີນໃຫ້ເຂົ້າສູ່ຂັ້ນຕອນທີ 2.

ການສະໝັກຂໍທຶນມີຂັ້ນຕອນດັ່ງນີ້:

1) **ຂັ້ນຕອນທີ 1:**
    - ຕື່ມຂໍ້ມູນໃນ ແບບສອບຖາມກ່ອນການສະໝັກ;
2) **ຂັ້ນຕອນທີ 2:**
    - ສົ່ງຍົດສະເໜີໂຄງການສະບັບເຕັມ; ແລະ
    - ແຜນງົບປະມານທີ່ອີງໃສ່ກິດຈະກຳ.

ພາຍຫຼັງການປະເມີນໃນຂັ້ນຕອນທີ 2 ແລ້ວ ຜູ້ສະໝັກທີ່ໄດ້ຄະແນນສູງຈະໄດ້ຮັບເຊີນໃຫ້ສົ່ງເອກະສານປະກອບຕາມທີ່ GI-TOC ຮ້ອງຂໍ ເພື່ອໃຫ້ GI-TOC ດຳເນີນການກວດສອບຂໍ້ມູນ ແລະ ປະເມີນຄວາມເໝາະສົມ (Due Diligence). ຜູ້ສະໝັກບໍ່ຄວນສົ່ງເອກະສານປະກອບໃດໆ ກ່ອນທີ່ຈະໄດ້ຮັບການຮ້ອງຂໍຈາກ GI-TOC.

ຜູ້ສະໝັກໃນຂັ້ນຕອນທີ 2 ທີ່ໄດ້ຄະແນນສູງ ຈະຖືກສະເໜີຊື່ເຂົ້າສູ່ຄະນະກຳມະການພິຈາລະນາທຶນຂອງ GI-TOC ເພື່ອພິຈາລະນາອະນຸມັດເປັນຂັ້ນສຸດທ້າຍ.

ກະລຸນາສົ່ງເອກະສານສະໝັກເບື້ອງຕົ້ນໄປທີ່ mnet-ctc-resilience@globalinitiative.net ພາຍໃນວັນທີ 30 ພະຈິກ 2026 ເວລາ 23:59 ໂມງ (CEST).

GI-TOC ຈະຮັບພິຈາລະນາພຽງ 1 ເອກະສານຕໍ່ຜູ້ສະໝັກ ຫາກຜູ້ສະໝັກສົ່ງເອກະສານສະໝັກຫຼາຍກວ່າ 1 ສະບັບສຳລັບກິດຈະກຳດຽວກັນ, GI-TOC ຈະພິຈາລະນາສະເພາະເອະສານສະໝັກສະບັບຫຼ້າສຸດເທົ່ານັ້ນ.

ກຳນົດເວລາຂອງຂັ້ນຕອນການສະໝັກຂໍທຶນ

ຜູ້ສະໝັກຕ້ອງສົ່ງເອກະສານສະໝັກພາຍໃນກຳນົດເວລາ ໂດຍເລີ່ມຈາກວັນເປີດຮັບສະໝັກ ຈົນເຖິງວັນປິດຮັບສະໝັກຕາມທີ່ໄດ້ປະກາດໄວ້. GI-TOC ຈະບໍ່ຮັບພິຈາລະນາເອກະສານສະໝັກທີ່ຍື່ນຫຼັງຈາກເລີຍຜ່ານກຳນົດເວລາ.

ກິດຈະກຳ	ຂອບເວລາ
ໄລຍະເວລາຂອງທຶນສະໜັບສະໜູນ	15 ກຸມພາ 2027 ຫາ 15 ກຸມພາ 2028
ການປະເມີນເບື້ອງຕົ້ນ ຜູ້ສະໝັກທີ່ໄດ້ຄະແນນສູງຈະໄດ້ຮັບເຊີນໃຫ້ຍື່ນເອກະສານສະໝັກສະບັບເຕັມ	4 ອາທິດ
ການປະເມີນເອກະສານສະໝັກສະບັບເຕັມ ຜູ້ສະໝັກທີ່ໄດ້ຄະແນນສູງຈະໄດ້ຮັບເຊີນໃຫ້ສົ່ງເອກະສານປະກອບ. ການອະນຸມັດຂັ້ນສຸດທ້າຍຈະດຳເນີນໂດຍຄະນະກຳມະການພິຈາລະນາທຶນ	6 ອາທິດ
ວັນເລີ່ມຕົ້ນກິດຈະກຳທີ່ໄວທີ່ສຸດ	15 ກຸມພາ 2027
ວັນສິ້ນສຸດກິດຈະກຳ ຫຼື ສັນຍາທີ່ຊ້ຳທີ່ສຸດ	15 ກຸມພາ 2028
ວັນເປີດ ແລະ ປິດຮັບສະໝັກ	1 ພະຈິກ 2026 – 7 ທັນວາ 2026

ຄຳຖາມ, ການສອບຖາມ ແລະ ຄຳຄິດເຫັນໃນລະຫວ່າງຂັ້ນຕອນການສະໝັກ

ຖ້າຫາກຜູ້ສະໝັກມີຄຳຖາມ, ຂໍ້ສົງໄສ ຫຼື ຄຳຄິດເຫັນກ່ຽວກັບເອກະສານສະໝັກຂອງຕົນ ຫຼື ຂັ້ນຕອນການສະໝັກ ກະລຸນາຕິດຕໍ່ຜ່ານອີເມວ: < mnet-ctc-resilience@globalinitiative.net >.

ຜູ້ສະໝັກສາມາດຮ້ອງຂໍຂໍ້ມູນລະອຽດເພີ່ມເຕີມ ຫຼື ຂໍຄຳຊີ້ແຈງເພີ່ມເຕີມກ່ຽວກັບຂັ້ນຕອນການສະໝັກ ໂດຍສົ່ງອີເມວໄປຫາທີ່ຢູ່ອີເມວຂ້າງເທິງ.

ຂໍ້ກຳນົດດ້ານພາສາ

ເອກະສານການສະໝັກທັງໝົດ ລວມທັງແບບສອບຖາມກ່ອນການສະໝັກ, ບົດສະເໜີໂຄງການສະບັບເຕັມ, ງົບປະມານທີ່ຈັດສັນຕາມກິດຈະກຳ ແລະ ເອກະສານປະກອບທັງໝົດ ສາມາດຍື່ນເປັນພາສາອັງກິດ ຫຼື ພາສາຫຼັກໃດໜຶ່ງໃນອະນຸພາກພື້ນແມ່ຂອງ ຊຶ່ງປະກອບມີ ພາສາຂະແມ, ພາສາລາວ, ພາສາໄທ ຫຼື ພາສາຫວຽດນາມ. ເອກະສານການສະໝັກໃນພາສາເຫຼົ່ານີ້ ສາມາດດາວໂຫຼດໄດ້ທີ່ https://globalinitiative.net/announcements/calling-innovative-proposals-to-combat-organized-crime-in-the-mekong/.

ຂະບວນການຄັດເລືອກຜູ້ໄດ້ຮັບທຶນ

ໃຜເປັນຜູ້ປະເມີນເອກະສານສະໝັກ

ຄະນະກຳມະການປະເມີນຈະເປັນຜູ້ພິຈາລະນາໃບສະໝັກແຕ່ລະສະບັບຕາມຄຸນຄ່າ ແລະ ຄວາມເໝາະສົມຂອງບົດສະເໜີ. ຄະນະກຳມະການປະເມີນປະກອບດ້ວຍພະນັກງານ GI-TOC ທີ່ປະຕິບັດໜ້າທີ່ໃນຫຼາຍຂະແໜງວຽກງານ ແລະ ຫຼາຍບົດບາດທີ່ແຕກຕ່າງກັນ. ຄະນະກຳມະການຈະກວດສອບບົດສະເໜີໂຄງການ ແລະ ງົບປະມານແຕ່ລະສະບັບ ພ້ອມທັງໃຫ້ຄະແນນຕາມເກນການປະເມີນທີ່ກຳນົດໄວ້.

ຄະນະກຳມະການປະເມີນຈະນຳສັງລວມບົດສະເໜີໂຄງການຂອງຜູ້ສະໝັກທີ່ຜ່ານເກນ ໃຫ້ DFAT ດຳເນີນການທົບທວນ. ພາຍຫຼັງທີ່ DFAT ຕີກລົງເຫັນດີແລ້ວ, ເອກະສານສະໝັກຈະຖືກສະເໜີຕໍ່ຄະນະກຳມະການພິຈາລະນາທຶນຂອງ GI-TOC ເພື່ອພິຈາລະນາອະນຸມັດເປັນຂັ້ນສຸດທ້າຍ. ຄະນະກຳມະການພິຈາລະນາທຶນປະກອບດ້ວຍຄະນະຜູ້ນຳອາວຸໂສຂອງ GI-TOC ໃນລະດັບສາກົນ ຊຶ່ງມີໜ້າທີ່ຮັບຜິດຊອບຕໍ່ທິດທາງ ແລະ ການຄຸ້ມຄອງພາບລວມຂອງໂຄງການ. ຄະນະກຳມະການພິຈາລະນາທຶນຂອງ GI-TOC ຈະເປັນຜູ້ຕັດສິນຂັ້ນສຸດທ້າຍ.

ໃຜເປັນຜູ້ອະນຸມັດທຶນ

ຄະນະກຳມະການພິຈາລະນາທຶນຂອງ GI-TOC ເປັນຜູ້ຕັດສິນວ່າຈະອະນຸມັດທຶນໃດແດ່ ໂດຍພິຈາລະນາຈາກຂໍ້ສະເໜີແນະຂອງຄະນະກຳມະການປະເມີນ, ຜູ້ໃຫ້ທຶນ (ລັດຖະບານອິດສະຕຣາລີ) ແລະ ຈຳນວນງົບປະມານທຶນທີ່ຍັງມີຢູ່ສຳລັບຈຸດປະສົງຂອງໂຄງການທຶນນີ້. ຄະນະກຳມະການອາດຮ້ອງຂໍໃຫ້ຜູ້ສະໝັກປັບປຸງ ຫຼື ເພີ່ມເຕີມຂໍ້ມູນໃນຊຸດເອກະສານການສະໝັກທີ່ໄດ້ຍື່ນໄປແລ້ວ.

ການຕັດສິນຂອງຄະນະກຳມະການບໍລິຫານຈັດການທຶນຂອງ GI-TOC ຖືເປັນທີ່ສຸດໃນທຸກປະເດັນ ລວມທັງ:

- ການອະນຸມັດທຶນ; ແລະ
- ຈຳນວນເງິນທຶນທີ່ຈະມອບໃຫ້.

ຈະບໍ່ມີກົນໄກການອຸທອນຕໍ່ຄຳຕັດສິນວ່າຈະອະນຸມັດ ຫຼື ບໍ່ອະນຸມັດທຶນ.

ຄະນະກຳມະການພິຈາລະນາທຶນຂອງ GI-TOC ຈະບໍ່ອະນຸມັດການສະໜັບສະໜູນທຶນ ຖ້າຫາກພິຈາລະນາຢ່າງມີເຫດຜົນແລ້ວເຫັນວ່າ ງົບປະມານຂອງໂຄງການທີ່ມີຢູ່ບໍ່ພຽງພໍສຳລັບການມອບທຶນ ແລະ/ຫຼື ບົດສະເໜີໂຄງການບໍ່ສະແດງໃຫ້ເຫັນເຖິງຄວາມຄຸ້ມຄ່າຂອງງົບປະມານ. GI-TOC ຂໍສະຫງວນສິດໃນການມອບທຶນໃນຈຳນວນທີ່ຕ່ຳກວ່າຈຳນວນທີ່ຜູ້ສະໝັກຮ້ອງຂໍ.

ການແຈ້ງຜົນ

GI-TOC ຈະແຈ້ງຜົນການພິຈາລະນາໃຫ້ຜູ້ສະໝັກຊາບເປັນລາຍລັກອັກສອນ. ໃນກໍລະນີທີ່ຜູ້ສະໝັກໄດ້ຮັບການຄັດເລືອກ, GI-TOC ຈະແຈ້ງເງື່ອນໄຂສະເພາະ ທີ່ກຳນົດຄວບຄູ່ກັບການມອບທຶນໃຫ້ຜູ້ສະໝັກຊາບ.

ການບໍ່ໄດ້ຮັບການຄັດເລືອກໃນຄັ້ງນີ້ ບໍ່ໄດ້ຕັດສິດຜູ້ສະໝັກໃນການຍື່ນສະໝັກຂໍຮັບທຶນຊ່ວຍເຫຼືອໃນໂອກາດໜ້າ.